ບົດລາຍງານ

ການຕິດຕາມຊຸກຍູ້ວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ທີ່ແຂວງອຸດົມໄຊ

ວັນທີ 06-12 ມິຖຸນາ 2026

ກອງເລຂາ CCM

ສະຖານທີ່ລົງຕິດຕາມຊຸກຍູ້ວຽກງານ

1. ພະແນກສາທາລະນະສຸກແຂວງ
2. ໂຮງໝໍແຂວງ (ໜ່ວຍງານອັນມະໂລກ ແລະ ສູນ POC)
3. ຫ້ອງການສາທາລະນະສຸກເມືອງຮຸນ
4. ສຸກສາລາສີບຸນເຮືອງ
5. ສຸກສາລາມາວາງ
6. ຫ້ອງການສາທາລະນະສຸກເມືອງປາກແບງ
7. ສຸກສາລາໄຊຊະນະ
8. ສຸກສາລາສີງໄຊ (ບໍ່ໄດ້ໄປຢ້ຽມຢາມຍ້ອນເສັ້ນທາງບໍ່ສະດວກ, ແຕ່ໄດ້ຂໍບົດລາຍງານ)

ຕາງໜ້າຈາກພາກສ່ວນທີ່ເຂົ້າຮ່ວມລົງຕິດຕາມຊຸກຍູ້ວຽກງານ:

1. ຮອງລັດຖະມົນຕີກະຊວງສາທາລະນະສຸກ, ປະທານ CCM
2. ກົມແຜນການ ແລະ ການເງິນ, ກະຊວງສາທາລະນະສຸກ
3. ສູນໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້
4. ສູນຕ້ານເອດ ແລະ ພຕພ
5. ສູນຄວບຄຸມວັນນະໂລກ
6. ພະແນກອົງການຈັດຕັ້ງສາກົນ, ກະຊວງການເງິນ, CCM
7. ກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ
8. ຫ້ອງການປະສານງານ (NPCO), ໂຄງການ ຂ-ບສພ (HANSA), ກົມແຜນການ ແລະ ການເງິນ, ກະຊວງ ສາທາລະນະສຸກ
9. ກົມຂະບວນການຊາວໜຸ່ມ, ສູນກາງຊາວໜຸ່ມ, CCM
10. ສະມາຄົມການພັດທະນາ ແລະ ສົ່ງເສີມການເປັນຜູ້ນຳແມ່ຍິງ, OC ແລະ CCM
11. ກອງເລຂາ CCM

ຈຸດປະສົງ

ເພື່ອຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານດ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ທີ່ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ ຕາມແຜນການຂອງ CCM ທີ່ໄດ້ວາງໄວ້ ເພື່ອປະເມີນຜົນໂດຍລວມຂອງໂຄງການ ໂດຍເນັ້ນໃສ່ວຽກງານຫຼາຍດ້ານເຊັ່ນ: ການເງິນ, ການຈັດຊື້, ການຈັດຕັ້ງປະຕິບັດ ແລະ ການລາຍງານ ຢູ່ ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນສຸກສາລາ

ອຽກງາມຕ້ານເອດ

ຈຸດດີ/ຜົນສຳເລັດ

- ໄດ້ຮັບການຊີ້ນຳ-ນຳພາຈາກຂັ້ນສູນກາງຮອດຂັ້ນທ້ອງຖິ່ນດ້ານການສະໜອງງົບປະມານ ແລະ ອຸປະກອນການແພດເປັນຢ່າງດີ.
- ບັນດາພະນັກງານໄດ້ຮັບການຝຶກອົບຮົມການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ ແລະ ໄດ້ເອົາໃຈໃສ່ໃນການຕິດຕາມ ແລະ ປິ່ນປົວຄົນເຈັບໂດຍນຳໃຊ້ຫຼັກການ 5 ດີ 1 ພໍໃຈ.
- ຈຳນວນການກວດເລືອດຊອກຫາເຊື້ອ HIV ຕັ້ງແຕ່ປີ 2021-2026 ໄດ້ທັງໝົດ 18,097 ຄົນ, ໃນນັ້ນ ຕົວເລກຕິດເຊື້ອສະສົມ ແລະ ກຳລັງຮັບການປິ່ນປົວຈຳນວນ 347 ກໍລະນີ ໃນກຸ່ມຄົນອາຍຸສະເລ່ຍລພຫວ່າງ 14-49 ປີ, ແລະກວດຫາເຊື້ອ ພຕພ ໃນປີ 2025-2026 ຈຳນວນທັງໝົດ 26,796 ກໍລະນີ, ເພດຍິງ 16,249, ຕິດເຊື້ອ ພຕພ ຈຳນວນ 644 ກໍລະນີ ແລະ ເສຍຊີວິດຈາກການຕິດເຊື້ອ HIV ສະສົມຈຳນວນ 3 ກໍລະນີ.
- ຂັ້ນແຂວງ ແລະ ເມືອງສາມາດກວດເລືອດຫາເຊື້ອ HIV ແລະ Syphilis ແລະ ມີ 1 ຫ້ອງ POC ສຳລັບບໍລິການຈ່າຍຢາ ART ຢູ່ໂຮງໝໍແຂວງທີ່ສາມາດປົ່ງມະຕິກວດເລືອດເຮສໄອວີ ດ້ວຍນ້ຳຢາ 3 tests (Determine, SD- Bioline ແລະ STAT-PAK).
- ມີເຄື່ອງກວດ GeneXpert ທັງ 2 ຈຸດບໍລິການ (ຮໝ ແຂວງ ແລະ ຮໝ ເມືອງຮຸນ).

ຈຸດດີ/ຜົນສຳເລັດ (ຕໍ່)

- ໄດ້ລົງໂຄສະນາ ແລະ ກວດເລືອດເຄື່ອນທີ່ໃຫ້ກຸ່ມສ່ຽງ ເຊັ່ນ ບໍ່ແຮ່ ແລະ ໂຮງງານຕ່າງໆ, ເຊິ່ງພົບການຕິດເຊື້ອສ່ວນໃຫຍ່ ແມ່ນໃນກຸ່ມສາວບໍລິການ, ພໍ່ເຮືອນ, ຊາຍຮັກຊາຍ, ແລະ ຄົນແຮງງານຕ່າງປະເທດ.
- ມີໜ່ວຍງານຮັບຜິດຊອບວຽກງານ HIV/AIDS ແຕ່ຂັ້ນແຂວງຮອດຂັ້ນເມືອງ.
- ນຳໃຊ້ລະບົບ DHIS2 ໃນການບັນທຶກ ແລະ ລາຍງານຢູ່ຂັ້ນແຂວງ ແລະ ຂັ້ນເມືອງ.

❖ **<u>ເມືອງຮຸນ:</u>**

- ໄດ້ລົງສຸຂະສຶກສາ ແລະ ໃຫ້ຄຳປຶກສາກ່ຽວກັບພະຍາດເອດສ໌ ແລະ ວິທີການປ້ອງກັນທຸກໆໄຕມາດ.
- ມີເຄື່ອງ GeneXpert ເພື່ອກວດກາເຊື້ອ ແລະ ບົ່ງມະຕິພະຍາດ, ເຊິ່ງກວດເຂດນອກ/ພະຍາດຍິງ 153 ຄົນ, ພົບເຊື້ອ 4 ຄົນ.
- ກວດ ພຕພ ທັງໝົດ 310 ຄົນ, ພົບເຊື້ອ 72 ຄົນ.

ຈຸດດີ/ຜົນສຳເລັດ (ຕໍ່)

- **ເມືອງປາກແບງ:**

❖ **<u>ຜົນສຳເລັດ (ປີ 2025):</u>**

- ລົງກວດສຸຂະພາບກຸ່ມສາວບໍລິການ 2 ຄັ້ງ (20 ຮ້ານ)
- ມີຜູ້ສະໝັກໃຈກວດ 367 ຄົນ, ກວດພົບເຊື້ອ HIV 11 ຄົນ (ສົ່ງເຂົ້າສູນຮັບຢາປິ່ນປົວທັງໝົດ)
- ກວດ ພຕພ 255 ຄົນ, ພົບເຊື້ອ ແລະ ປິ່ນປົວ 116 ຄົນ.

❖ **<u>ຜົນການດຳເນີນງານ (5 ເດືອນຕົ້ນປີ 2026):</u>**

- ລົງກວດສຸຂະພາບກຳມະກອນບໍລິສັດສ້າງເຂື່ອນນ້ຳຂອງ 3 ຄັ້ງ, ກວດ HIV 352 ຄົນ, ພົບເຊື້ອ 1 ຄົນ.
- ກວດ HIV ຜູ້ມາບໍລິການຢູ່ໂຮງໝໍເມືອງ 116 ຄົນ, ພົບເຊື້ອ 4 ຄົນ ແລະ ໄດ້ແນະນ□ເຂົ້າສູນປິ່ນປົວແລ້ວ.
- ກວດ ພຕພ 948 ຄົນ, ພົບເຊື້ອ ແລະ ປິ່ນປົວ 37 ຄົນ.
- ແຈກຢາຍຖົງຢາງອະນາໄມ ຈຳນວນ 4,000 ຖົງ.

ການນຳໃຊ້ງົບປະມານ

ຂັ້ນແຂວງ:

- ໃນປີ 2025, ໄດ້ຮັບງົບປະມານຈາກໂຄງການ HANSA2/GF ຈຳນວນ 185,833,991 ກີບ ແລະ ຈາກລັດຖະບານ ຈຳນວນ: 62,994,000 ກີບ, ລວມທັງໝົດ: 248,827991 ກີບ.
- ໃນ 6 ເດືອນຕົ້ນປີ 2026, ໄດ້ຮັບງົບປະມານຈາກໂຄງການ HANSA2/GF ຈຳນວນ 98,914,500 ກີບ ແລະ ຈາກ ລັດຖະບານຈຳນວນ: 22,500,000 ກີບ, ລວມທັງໝົດ 121,414,500 ກີບ.

ເມືອງຮຸນ:

- ໄດ້ຮັບງົບປະມານສຳລັບວຽກງານເອດສ໌ ແລະ ພຕພ: 1,400 ໂດລາ/ປີ.

ເມືອງປາກແບ:

- ໄດ້ຮັບງົບປະມານສຳລັບວຽກງານເອດສ໌ ແລະ ພຕພ: 1,400 ໂດລາ/ປີ.

ບັນດາສິ່ງທ້າທາຍ

- ຂາດງົບປະມານໃນການເຄື່ອນໄຫວກິດຈະກຳດູແລ-ເບິ່ງແຍງໃນຊຸມຊົນ ແລະ ຫຼຸດຜ່ອນຈຳແນກ-ລັງກຽດຕໍ່ຜູ້ທີ່ຕິດເຊື້ອເຮສໄອວີ.
- ພະນັກງານມີການສັບປ່ຽນໜ້າທີ່, ພະນັກງານບໍ່ພຽງພໍ ແລະ ຍັງຂາດຄວາມຮູ້ດ້ານ IT.
- ເຄື່ອງກວດຫາເຊື້ອ HIV (RDT) ບໍ່ພຽງພໍສຳລັບກຸ່ມທີ່ມີຄວາມສ່ຽງສູງ.
- ການຈັດຕັ້ງປະຕິບັດກິດຈະກຳວຽກງານຕ້ານເອດເຊັ່ນ: ໂຄສະນາ, ຝຶກອົບຮົມ, ເກັບກຳຂໍ້ມູນ, ກວດເລືອດເຄື່ອນທີ່ຍັງບໍ່ທັນທົ່ວເຖິງໃນບັນດາກຸ່ມເປົ້າໝາຍ ຍ້ອນງົບປະມານບໍ່ພຽງພໍ.
- ການເຊື່ອມສານວຽກງານ 3 ພະຍາດກັບວຽກງານອື່ນ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ.
- ເມືອງປາກແບງມີຄົນຕ່າງປະເທດມາອາໄສ ແລະ ເຮັດທຸລະກິດຫຼາຍ, ແຕ່ການໃຫ້ຄວາມຮ່ວມມືໃນການກວດເລືອດຫາເຊື້ອ HIV ໃນກຸ່ມສ່ຽງສູງທີ່ເປັນແຮງງານເຄື່ອນຍ້າຍ, ສາວແອບແຝງ, ແລະ ຊພຊ ຍັງມີໜ້ອຍ ແລະ ບໍ່ຄ່ອຍໃຫ້ຄວາມຮ່ວມມື.

ບັນດາສິ່ງທ້າທາຍ (ຕໍ່)

- ຍັງມີການຈຳແນກ-ລັງກຽດຢູ່ຈຸດສະຖານທີ່ບໍລິການ, ໃນຄອບຄົວຄົນເຈັບ, ຊຸມຊົນ ແລະ ສັງຄົມ.
- ຕາໜ່າງການບໍລິການແຜນງານຕ້ານເອດ ຍັງບໍ່ທັນຂະຫຍາຍລົງຮອດຂັ້ນສຸກສາລາ.
- ຄົນເຈັບເຂົ້າມາຮັບການປິ່ນປົວຊັກຊ້າ ຍ້ອນເສດຖະກິດການເງິນ.
- ສະຖານທີ່ບໍລິການຄັບແຄບແອອັດ, ບໍ່ມີຫ້ອງວິເຄາະ ແລະ ພະນັກງານບໍ່ພຽງພໍ.
- ໄວໜຸ່ມບາງກຸ່ມທີ່ເຄື່ອນຍ້າຍໄປເຮັດວຽກຢູ່ບ່ອນອື່ນ ຍັງບໍ່ໃຫ້ຄວາມຮ່ວມມືກັບແພດໝໍ, ເຮັດໃຫ້ການເກັບຂໍ້ມູນບໍ່ຊັດເຈນ ແລະ ບໍ່ຄົບຖ້ວນໃນການລາຍງານຂັ້ນເທິງ.

ຂໍ້ສະເໜີ:

- ສະເໜີຂໍທຶນຝຶກອົບຮົມວຽກງານເອດສ໌ (HIV/AIDS) ໃຫ້ແກ່ພະນັກງານ.
- ສະເໜີໃຫ້ສູນກາງເຜີຍແຜ່ກົດໝາຍ/ນິຕິກຳບັງຄັບຜູ້ປະກອບການທຸລະກິດ ແລະ ບັງຄັບຜູ້ຕິດເຊື້ອເພື່ອບໍ່ໃຫ້ມີການແຜ່ເຊື້ອຕໍ່.
- ຂໍ Computer 1 ໜ່ວຍ ແລະ ອິນເຕີເນັດໃຫ້ບາງສຸກສາລາ.
- ຂໍອຸປະກອນເຊັ່ນ: ເຄື່ອງສຽງ, ແຜ່ນພັບ, ແລະ ແຜ່ນພິກ ເພື່ອນຳໃຊ້ເຂົ້າການໂຄສະນາວຽກງານເອດແບບເຄື່ອນທີ່ຈາກພາກສ່ວນຕ່າງໆ.
- ຂໍງົບປະມານໃນການປັບປຸງຕຶກອາຄານ ແລະ ຕໍ່ເຕີມຫ້ອງ POC.
- ຂໍຍົກລະດັບການບໍລິການຈາກ POC ເປັນ ສູນປິ່ນປົວ ARV.
- ກ່ຽວກັບຄົນຕ່າງປະເທດທີ່ຕິດເຊື້ອເອສໄອວີ ຈະໃຫ້ປິ່ນປົວດ້ວຍຢາ ARV ຢູ່ສູນປິ່ນປົວໃນປະເທດລາວບໍ່? ຫລື ຈະແນະນຳແນວໃດ?
- ຂໍພະນັກງານເພີ່ມ ເພື່ອຮັບປະກັນໃຫ້ແກ່ການບໍລິການໃຫ້ທົ່ວເຖິງ.

ຂໍ້ສະເໜີ (ຕໍ່):

- ຂໍໃຫ້ມີການຝຶກອົບຮົມຄືນ ວຽກງານການກັນ ແລະ ຄວບຄຸມພະຍາດຕິດຕໍ່ ໃຫ້ແກ່ພະນັກງານຂັ້ນເມືອງ ແລະ ສຸກສາລາ.
- ສະເໜີໃຫ້ຂັ້ນສູນກາງ ແລະ ຂັ້ນແຂວງ ລົງຕິດຕາມຊຸກຍູ້ຂັ້ນເມືອງ/ສຸກສາລາ ຢ່າງໜ້ອຍ ປີລະ 3 ຄັ້ງ.
- ຂໍພາຫະນະລົດຈັກ 1 ຄັນ ໃຫ້ເມືອງ ເພື່ອຮັບໃຊ້ວຽກງານລົງຄວບຄຸມພະຍາດຕິດຕໍ່.
- ຂໍຄອມພິວເຕີ 1 ໜ່ວຍ ໃຫ້ໜ່ວຍງານລະບາດ ໂຮງໝໍເມືອງ.
- ຂໍໂກຕາລັດຖະກອນໃຫ້ແກ່ພະນັກງານອາສາສະໝັກ.
- ສະເໜີຂໍບໍລິການກວດຊອກຫາການຕິດເຊື້ດເຮສໄອວີຢູ່ຂັ້ນສຸກສາລາ ເນື່ອງຈາກວ່າໄດ້ມີການບໍລິການຝາກທ້ອງ ແລະ ຊ່ວຍເກີດລູກຢູ່ສຸກສາລາ.
- ສະເໜີຂໍອຸປະກອນການກວດຫາເຊື້ອ HIV ເພື່ອໃຫ້ສາມາດບໍລິການໄດ້ຢູ່ຂັ້ນທ້ອງຖິ່ນ.
- ສະເໜີຂໍອຸປະກອນການແພດທີ່ຈຳເປັນ ເປັນຕົ້ນແມ່ນ ຊຸດຊ່ວຍເກີດລູກ ແລະ ຊຸດຜ່າຕັດນ້ອຍ

ຂໍ້ສະເໜີ (ຕໍ່):

- ສະເໜີໃຫ້ມີໂຄງການເຜີຍແຜ່-ໂຄສະນາ ຢູ່ຂັ້ນບ້ານໃຫ້ທົ່ວເຖິງ ໂດຍຂໍການສະໜັບສະໜູນ ຈໍ LCD ເພື່ອເປີດວີດີໂອ ຫຼື ລະຄອນສັ້ນ ເພື່ອສ້າງຄວາມຕື່ນຕົວໃຫ້ແກ່ໄວໜຸ່ມ.
- ສະເໜີຂໍງົບການຝຶກອົບຮົມການດູແລ,ການປິ່ນປົວອາການແຊກຊ້ອນ ແລະໃຫ້ຢາ ART.
- ຂໍຝຶກອົບຮົມວິຊາການດ້ານການກວດ VL ແລະ CD4.
- ຂໍຝຶກອົບຮົມການນຳໃຊ້ໂປຣແກຣມ VLAO ແລະ ປ້ອນຂໍ້ມູນໃນລະບົບ DHIS2.

ອຽກງາມອັນມະໂລກ

ຈຸດດີ/ຜົນສຳເລັດ

- ການຊອກຄົ້ນຫາຄົນຕິດເຊື້ອວັນນະໂລກທີ່ຂຶ້ນທະບຽນໃໝ່ (ກໍລະນີຕິດເຊື້ອໃໝ່ ແລະ ກັບຄືນເປັນອີກ) ບັນລຸເກີນຄາດໝາຍ (107%) ແລະ ຮັບປະກັນວ່າຄົນເຈັບຈະໄດ້ຮັບການປິ່ນປົວຫາຍດີໃຫ້ໄດ້ ≥ 90% ແລະ ບຸກຄົນໃກ້ຊິດກັບຄົນເຈັບ Pb+ ໄດ້ຮັບການກິນຢາປ້ອງກັນໃນສົກປີ 2026.
- ໂຮງໝໍແຂວງມີເຄື່ອງ GeneXpert ເພື່ອບົ່ງມະຕິວັນນະໂລກໄວຂຶ້ນ ແລະໄດ້ຮັບຜົນຊັດເຈນ.
- ຄົນເຈັບວັນນະໂລກ ສ່ວນຫຼາຍແມ່ນໄດ້ກວດຫາເຊື້ອເອສໄອວີ ແລະ ໄດ້ຮັບການປິ່ນປົວໂດຍບໍ່ໄດ້ເສຍຄ່າ.
- ເດັກລຸ່ມ 5 ປີ ທີ່ໃກ້ສິດກັບຄອບຄົວຜູ້ຕິດເຊື້ອວັນນະໂລກສ່ວນຫລາຍແມ່ນໄດ້ກິນຢາປ້ອງກັນ.
- ມີການປ້ອນຂໍ້ມູນເຂົ້າລະບົບ DHIS2 (TB Tracker) ເປັນປົກກະຕິ.
- ພະນັກງານທີ່ຮັບຜິດຊອບວຽກງານ ແມ່ນໄດ້ເອົາໃຈໃສ່ໃນການຕິດຕາມ, ກວດ ແລະ ປິ່ນປົວຄົນເຈັບຢ່າງຕໍ່ເນື່ອງ.
- ໃນປີ 2025, ກວດຫາເຊື້ອວັນນະໂລໄດທັງໝົດ 2,238 ກໍລະນີ, ພົບເຊື້ອ: 295 ກໍລະນີ.
- ໃນ 5 ເດືອນຕົ້ນ ປີ 2026, ກວດຫາເຊື້ອວັນນະໂລກໄດ້ທັງໝົດ 828 ກໍລະນີ, ພົບເຊື້ອ: 115 ກໍລະນີ.

ການນຳໃຊ້ງົບປະມານ

ຂັ້ນແຂວງ:

- ໃນປີ 2025, ໄດ້ຮັບງົບປະມານຈາກໂຄງການ HANSA2/GF ຈຳນວນ 430,097,036 ກີບ.
- ໃນ 6 ເດືອນຕົ້ນປີ 2026, ໄດ້ຮັບງົບປະມານຈາກໂຄງການ HANSA2/GF ຈຳນວນ 251,608,494 ກີບ ແລະ ຈາກລັດຖະບານຈຳນວນ: 10,500,000 ກີບ, ລວມທັງໝົດ 262,108,494 ກີບ.

ເມືອງຮຸນ:

- ຍອດຍົກມາ ແລະ ງົບປະມານທີ່ໄດ້ຮັບປີ 2025 ແມ່ນ 60,200,000 ກີບ, ຈ່າຍໄປ 30,140,000 ກີບ, ຍັງເຫຼືອ 32,060,000 ກີບ.
- **ເມືອງປາກແບ:**
- ປີ 2025, ງົບປະມານຮັບທັງໝົດ 34,154,028 ກີບ, ຍັງເຫຼືອ 11,028 ກີບ.
- ປີ 2026, ງົບປະມານຮັບທັງໝົດ 17,183,000 ກີບ, ຍັງເຫຼືອ 4,080,000 ກີບ.

ບັນດາສິ່ງທ້າທາຍ

- ຍັງມີການຈຳແນກ-ລັງກຽດຄົນເຈັບວັນນະໂລກຢູ່ຂັ້ນຊຸມຊົນ.
- ງົບປະມານໃນການລົງຊອກຄົ້ນຫາຜູ້ຕິດເຊື້ອ HIV, TB ແລະ ງົບສຸຂະສຶກສາມີຈຳກັດ.
- ປະຊາຊົນບາງບ້ານ ຫຼື ບາງຄົນບໍ່ມີຄວາມຮ່ວມມືໃນການນັດໝາຍຂອງພະນັກງານຂັ້ນສຸກສາລາ, ບາງເທື່ອໄປນອນຢູ່ໄຮ່ນາ ຫຼື ສະນຳ, ແລະ ບາງຄົນຍັງຖືເບົາໃນຮັກສາສຸຂະພາບໂດຍສະເພາະແມ່ນວຽກງານວັນນະໂລກ.
- ຜູ້ຮັບຜິດຊອບວຽກວັນນະໂລກຂັ້ນສຸກສາລາຍັງບໍ່ທັນເອົາໃຈໃສ່ວຽກງານ (ສົ່ງກວດຕົວຢ່າງໜ້ອຍ);
- ການສະໝັກໃຈມາກວດຊອກເຊື້ອມີໜ້ອຍ.
- ບົ່ງມະຕິ ແລະ ການນຳສົ່ງຕົວຢ່າງຍັງຊັກຊ້າ (ອາດເຮັດໃຫ້ມີການແຜ່ເຊື້ອກ່ອນໄດ້ຮັບການປິ່ນປົວ); ຂາດອຸປະກອນດູດຂີ້ສະເໝດ ແລະ ອຸປະກອນຮັບໃຊ້ການລົງສຸຂະສຶກສາ (ເຊັ່ນ: ລຳໂພງ, ໄມໂຄຣໂຟນ, ໂພສເຕີ, LCD).
- ການລາຍງານມີຄວາມຊັກຊ້າ ຍ້ອນພະນັກງານຮັບຜິດຊອບຫຼາຍໜ້າທີ່ ແລະ ມີການສັບຊ້ອນພະນັກງານ.

ຂໍ້ສະເໜີ:

- ສະເໜີໃຫ້ທາງສູນກາງລົງມາຊອກຄົ້ນກໍລະນີສົງໄສອັນຕະໂລກກັບທີ່ (ACF) ຢູ່ຂັ້ນສຸກສາລາແຕ່ລະແຫ່ງ.
- ສະເໜີໃຫ້ຂັ້ນສູນກາງ/ແຂວງ ລົງຕິດຕາມຊຸກຍູ້ຢ່າງໜ້ອຍ 2 ຄັ້ງ/ປີ.
- ຂໍສະໜັບສະໜູນອຸປະກອນສຸຂະສຶກສາ (ຕູ້ລຳໂພງ, ໄມ) ແລະ ງົບປະມານລົງເຄື່ອນໄຫວ/ຊຸກຍູ້ສຸກສາລາ.
- ຂໍພາຫະນະລົດຈັກຮັບໃຊ້ວຽກງານ (ອັນຕະໂລກ, ເອດສ, ໄຂ້ຍຸງ) 1 ຄັນ.
- ຂໍຕົກປິ່ນປົວອັນຕະໂລກ 1 ຫຼັງ.
- ຂໍງົບປະມານຈັດກອງປະຊຸມສະເພາະວຽກງານເອດສ, ພຕພ, ແລະ ອັນຕະໂລກ ໃຫ້ໄດ້ຢ່າງໜ້ອຍ 1-2 ຄັ້ງ/ປີ.

ອຽກງາມໄຂ້ຍຸງ

ຈຸດດີ/ຜົນສຳເລັດ

- ໄດ້ຮັບການຊີ້ນຳ-ນຳພາ ແລະ ການສະໜັບສະໜູນງົບປະມານ/ອຸປະກອນຈາກຂັ້ນເທິງ ແລະ ອົງການຈັດຕັ້ງສາກົນຢ່າງໃກ້ຊິດ; ພະນັກງານມີຄວາມຮັບຜິດຊອບສູງ; ອຳນາດການປົກຄອງ ແລະ ປະຊາຊົນໃຫ້ການຮ່ວມມື ແລະ ເຂົ້າມາຮັບການບໍລິການຫຼາຍຂຶ້ນ.
- ນຳໃຊ້ມາດຕາການ 1-3-7 ໃນການສອບສວນ ແລະ ໂຕ້ຕອບ ແລະ ຍຸດທະສາດເລັ່ງລັດກ□າຈັດມາລາເຣຍ.
- ມີຕາໜ່າງການຄອບຄຸມພາຫະນະນຳເຊື້ອໃນກຸ່ມເປົ້າໝາຍສ່ຽງ ແລະ ເຝົ້າລະວັງການສົ່ງເຊື້ອໄຂ້ມາລາເຣຍກັບມາເປັນອີກ.

ການນຳໃຊ້ງົບປະມານ

ຂັ້ນແຂວງ:

- ໃນປີ 2025, ໄດ້ຮັບງົບປະມານຈາກໂຄງການ RAI4E ຈຳນວນ 374,024,000 ກີບ.
- ໃນ 6 ເດືອນຕົ້ນປີ 2026, ໄດ້ຮັບງົບປະມານຈາກໂຄງການ RAI4E ຈຳນວນ 300,046,000 ກີບ

ເມືອງຮຸນ:

- ສຳລັບປີ 2026, ໄດ້ຮັບງົບປະມານ RAI4E ຈຳນວນ 26,199,000 ກີບ.

ເມືອງປາກແບງ:

- ບໍ່ໄດ້ລາຍງານຈຳນວນງົບປະມານທີ່ໄດ້ຮັບ

ขັ້ນຕອນສິ່ງທ້າທາຍ

- ປະຊາຊົນບາງຄົນຍັງ ບໍ່ໃຫ້ຄວາມຮ່ວມມືໃນການເຈາະເລືອດເພື່ອກວດຊອກຫາເຊື້ອມາລາເລຍ.
- ການລົງໂຄສະນາວຽກງານສຸກຂະສຶກສາຍັງບໍ່ທົ່ວເຖິງກຸ່ມເປົ້າໝາຍທີ່ມີຄວາມສ່ຽງ.
- ປະຊາຊົນບາງກຸ່ມຍັງບໍ່ເອົາໃຈໃສ່ວຽກງານ 5 ປ ເພື່ອປ້ອງກັນໄຂ້ເລືອດອອກ.
- ສຳລັບສຸກສາລາບາງແຫ່ງ, ການປ້ອນຂໍ້ມູນຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ຍ້ອນວຽກຫຼາຍ ແລະ ບໍ່ມີສັນຍານເນັດ.
- ສະຖານທີ່ ແລະ ຕົກອາຄານຄັບແຄບ-ແອອັດ.

ພາກສະເໜີ:

ຂັ້ນແຂວງ:

- ສະເໜີຂໍງົບປະມານເພີ່ມໃນການເຄື່ອນໄຫວແຕ່ລະແຜນງານ.
- ສະເໜີຂໍຄອມພິວເຕີໃໝ່ເພື່ອທົດແທນເຄື່ອງທີ່ເກົ່າແກ່ ແລະ ເປ່ເພ.
- ສະເໜີຂໍປິ້ນເຕີ 1 ເຄື່ອງ.
- ສະເໜີຂໍດອກໄຟສຳລັບຂ້າເຊື້ອ.
- ສະເໜີຂໍອິນເຕີເນັດສຳລັບຕຶກອັນມະໂລກ.

ຂັ້ນເມືອງ ແລະສຸກສາລາ:

- ຂໍສະໜັບສະໜູນອຸປະກອນສຸຂະສຶກສາ (ຕູ້ລຳໂພງ, ໄມ) ແລະ ງົບປະມານລົງເຄື່ອນໄຫວ/ຊຸກຍູ້ສຸກສາລາ.
- ຂໍຄອມພິວເຕີ 1 ໜ່ວຍ ໃຫ້ໜ່ວຍງານລະບາດ ໂຮງໝໍເມືອງ.
- ຂໍອຸປະກອນຮັບໃຊ້ວຽກງານສຸຂະສຶກສາ (ຕູ້ລຳໂພງ ແລະ ໄມໂຄຣໂຟນ).
- ສະເໜີຂໍໃຫ້ຂັ້ນເທິງສະໜອງ ມຸ້ງ ແລະ ຢາຢ້ອມມຸ້ງ ເພື່ອຢາຍໃຫ້ແກ່ຄອບຄົວທຸກຍາກ ທີ່ຂາດເຂີນເງື່ອນໄຂໃນທ້ອງຖິ່ນ.

ຄຳແນະນຳຈາກທີມງານຕິດຕາມກວດກາ:

1. ສຳລັບວຽກງານ HIV, ສະເໜີໃຫ້ເພີ່ມການໂຄສະນາ ແລະ ກວດຫາເຊື້ອແບບເຄື່ອນທີ່ໃນເຂດທີ່ມີຄວາມສ່ຽງສູງ ແລະ ໃຫ້ຢາກັບທີ່ເພື່ອປ້ອງກັນບໍ່ໃຫ້ຄົນເຈັບສູນຫາຍ.
2. ສະເໜີໃຫ້ຂັ້ນແຂວງ ແລະ ຂັ້ນເມືອງສ້າງແຜນງົບປະມານທີ່ຊັດເຈນ ເພື່ອສະເໜີຕໍ່ຜູ້ໃຫ້ທຶນ.
3. ສະເໜີໃຫ້ເພີ່ມການເຊື່ອມສານວຽກງານ 3 ພະຍາດ ແລະ ວາງແຜນລົງຕິດຕາມຊຸກຍູ້ວຽກງານຮ່ວມກັນ.
4. ສະເໜີໃຫ້ສຸມໃສ່ຕົວຊີ້ວັດຂອງກິດຈະກຳທີ່ຈະສາມາດບັນລຸໄດ້ ແລະ ໄດ້ຮັບເງິນ QPS.
5. ສະເໜີໃຫ້ເມືອງອຳນວຍຄວາມສະດວກໃຫ້ສຸກສາລາໃນເວລາມາສົ່ງຕົວຢ່າງທຸກຄັ້ງ ແມ່ນໃຫ້ກະກຽມການເບີກຈ່າຍເງິນທັນທີ.
6. ສະເໜີການນຳຊຸກຍູ້ວຽກງານວິຊາການດ້ານການບໍລິການເພື່ອບໍ່ໃຫ້ພະນັກງານແພດຕິດເຊື້ອ.
7. ສະເໜີໃຫ້ຂັ້ນແຂວງ, ຂັ້ນເມືອງ, ແລະ ຂັ້ນສຸກສາລາ ເພີ່ມການປະສານງານຕິດຕາມຢ່າງໃກ້ຊິດ ແລະ ເປັນປະຈຳ ເພື່ອຮັບປະກັນການຈັດຕັ້ງປະຕິບັດກິດຈະກຳໃຫ້ສຳເລັດຕາມແຜນ.

ขอบใจ

PHOTO OF SITE VISIT TEAM


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ພັກປະຊາຊົນປະຕິວັດລາວທີ່ນິກຽດສະຫ່ຳໝື້ນຍືນ
ປະທານ


OUDOMXAY PROVINCIAL HOSPITAL


HOUN DISTRIC T HI ALTH OFFI E


ສຸກສາລາ ສິບເຮືອງ




ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ພັກ ປະຊາຊົນ ປະຕິວັດລາວ ທີ່ມີກຽດສະຫງ່າ ໝັ້ນຍືນ


XAY XA NA HEALTH CENTER